**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງອຸດົມໄຊ ເລກທີ 111 /ອຊ

ອຸດົມໄຊ, ລົງວັນທີ 24 ກຸມພາ 2022

# ຂໍ້ຕົກລົງ

## ວ່າດ້ວຍກອງທຶນຄຸ້ມຄອງໄພພິບັດ ແລະ ສັງຄົມສົງເຄາະ (ສະບັບປັບປຸງ)

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015;
- ອີງຕາມ ກົດໝາຍວ່າດ້ວຍການສ້າງນິຕິກຳ ສະບັບເລກທີ 19/ສພຊ, ລົງວັນທີ 12 ກໍລະກົດ 2012;
- ອີງຕາມ ກົດໝາຍວ່າດ້ວຍການຄຸ້ມຄອງໄພພິບັດ ສະບັບເລກທີ 71/ສພຊ, ລົງວັນທີ 24 ມິຖຸນາ 2019;
- ອີງຕາມ ດຳລັດວ່າດ້ວຍສັງຄົມສົງເຄາະ ສະບັບເລກທີ 169/ລບ, ລົງວັນທີ 19 ມິຖຸນາ 2013;
- ອີງຕາມ ດຳລັດວ່າດ້ວຍກອງທຶນຄຸ້ມຄອງໄພພິບັດ ສະບັບເລກທີ 631/ລບ, ລົງວັນທີ 24 ທັນວາ 2020;
- ອີງຕາມ ມະຕິກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາປະຊາຊົນແຂວງ ຊຸດທີ II ສະບັບເລກທີ 205/ ຄປຈ.ສພຂ, ລົງວັນທີ 08 ກຸມພາ 2022

**ເຈົ້າແຂວງ ຕົກລົງ:**

## ໝວດທີ 1

## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ (ປັບປຸງ)

ຂໍ້ຕົກລົງສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບກອງທຶນຄຸ້ມຄອງໄພພິບັດ ແລະ ສັງຄົມສົງເຄາະ ເພື່ອລະດົມທຶນ, ສະສົມທຶນຈາກບຸກຄົນ, ນິຕິບຸກຄົນ, ຄົວເຮືອນ, ອົງການຈັດຕັ້ງພັກ-ລັດ ແລະ ອົງການຈັດຕັ້ງສາກົນທັງພາຍໃນ ແລະ ຕ່າງປະເທດ. ເພື່ອຊ່ວຍເຫຼືອບັນເທົາທຸກ ດ້ານມະນຸດສະທຳແກ່ເປົ້າໝາຍຜູ້ປະສົບເຄາະຮ້າຍຈາກໄພພິບັດ ແລະ ຜູ້ດ້ອຍໂອກາດທາງສັງຄົມ.

### ມາດຕາ 2 ກອງທຶນຄຸ້ມຄອງໄພພິບັດ ແລະ ສັງຄົມສົງເຄາະ (ໃໝ່)

ກອງທຶນຄຸ້ມຄອງໄພພິບັດ ແລະ ສັງຄົມສົງເຄາະ ແມ່ນກອງທຶນຂອງລັດ ທີ່ສ້າງຕັ້ງຂຶ້ນເພື່ອລະດົມທຶນ, ສະສົມທຶນ ແນໃສ່ຮັບປະກັນໃຫ້ມີງົບປະມານ ເພື່ອນຳໃຊ້ເຂົ້າໃນການຊ່ວຍເຫຼືອບັນເທົາທຸກດ້ານມະນຸດສະທຳແກ່ເປົ້າໝາຍຜູ້ປະສົບເຄາະຮ້າຍຈາກໄພພິບັດ ແລະ ຜູ້ດ້ອຍໂອກາດທາງສັງຄົມ.

**ມາດຕາ 3 ອະທິບາຍຄຳສັບ (ປັບປຸງ)**

**ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງນີ້:**

1. **ກອງທຶນ** ໝາຍເຖິງການປະກອບສ່ວນທຶນຮອນຈາກພາກລັດ, ເອກະຊົນ, ບຸກຄົນ, ນິຕິບຸກຄົນ, ຄົວເຮືອນ ແລະ ອົງການຈັດຕັ້ງສາກົນ ຕາມລະບຽບການ ແລະ ຄວາມສະໝັກໃຈ;
2. **ຄຸ້ມຄອງ** ໝາຍເຖິງຂະບວນການຕ່າງໆກ່ຽວກັບການຈັດຕັ້ງປະຕິບັດກອງທຶນໃຫ້ຖືກຕ້ອງຕາມລະບຽບຫຼັກການ;
3. **ໄພພິບັດ** ໝາຍເຖິງ ເຫດການທີ່ເປັນອັນຕະລາຍຮ້າຍແຮງທີ່ເກີດຂຶ້ນຈາກທຳມະຊາດ ຫຼື ມະນຸດສ້າງຂຶ້ນ ຊຶ່ງ ສ້າງຄວາມເສຍຫາຍຢ່າງຫຼວງຫຼາຍ ຕໍ່ ສຸຂະພາບ, ຊີວິດ, ຊັບສິນ, ເສດຖະກິດ ແລະ ການດຳລົງຊີວິດຂອງຄົນໃນສັງຄົມ ທັງໃນໄລຍະສັ້ນ ແລະ ໄລຍະຍາວ;
4. **ສັງຄົມສົງເຄາະ** ໝາຍເຖິງການປະຕິບັດນະໂຍບາຍການຊ່ວຍເຫຼືອ ແລະ ການບໍລິການເພື່ອຕອບສະໜອງທາງດ້ານວັດຖຸ ແລະ ດ້ານຈິດໃຈໃຫ້ແກ່ຜູ້ປະສົບເຄາະຮ້າຍຈາກໄພພິບັດ ແລະ ຜູ້ດ້ອຍໂອກາດທາງສັງຄົມ ໂດຍການປະກອບສ່ວນຂອງພາກລັດ, ບຸກຄົນ, ນິຕິບຸກຄົນ, ຊຸມຊົນ ແລະ ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ;
5. **ຜູ້ດ້ອຍໂອກາດທາງສັງຄົມ** ໝາຍເຖິງການຂາດຜູ້ເບິ່ງແຍງດູແລ, ທີ່ຢູ່ອາໄສ, ເຄື່ອງໃຊ້ສອຍ, ສະບຽງອາຫານ, ເງື່ອນໄຂໃນການເຂົ້າເຖິງການບໍລິການທາງດ້ານການສຶກສາ, ວິຊາຊີບ, ການປິ່ນປົວສຸຂະພາບ ແລະ ການໃຫ້ຄຳປຶກສາດ້ານຈິດໃຈໃນການດຳລົງຊີວິດ.

**ມາດຕາ 4 ຫຼັກການຄຸ້ມຄອງ ແລະ ການນຳໃຊ້**

1. ທຸກລາຍຮັບ ແລະ ລາຍຈ່າຍເງິນກອງທຶນ ຕ້ອງເຄື່ອນໄຫວຜ່ານບັນຊີເງິນກອງທຶນ ທີ່ເປີດຢູ່ຄັງເງິນປະຈຳແຂວງ ແລະ ຄັງເງິນປະຈຳເມືອງ, ລົງບັນຊີຕາມຫຼັກການ ແລະ ລະບຽບການພື້ນຖານບັນຊີແຫ່ງລັດ;
2. ຮັບປະກັນການຊ່ວຍເຫຼືອ ແລະ ຄຸ້ມຄອງກອງທຶນ ຕາມກົດໝາຍ ແລະ ລະບຽບການ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວແຂວງ;
3. ນຳໃຊ້ໃຫ້ຖືກຕ້ອງຕາມເປົ້າໝາຍ, ປະຢັດ, ມີປະສິດທິພາບ, ປະສິດທິຜົນ, ໂປ່ງໃສ, ຍຸຕິທຳ ແລະ ສາມາດກວດສອບໄດ້.

**ມາດຕາ 5 ຂອບເຂດການນຳໃຊ້ (ປັບປຸງ)**

ຂໍ້ຕົກລົງສະບັບນີ້ມີຜົນບັງຄັບໃຊ້ຊ່ວຍເຫຼືອບຸກຄົນ, ຄົວເຮືອນ ທີ່ປະສົບເຄາະຮ້າຍຈາກໄພພິບັດ ແລະ ຜູ້ດ້ອຍໂອກາດທາງສັງຄົມຢູ່ພາຍໃນແຂວງອຸດົມໄຊ, ຊຶ່ງບໍ່ມີຜົນບັງຄັບໃຊ້ສຳລັບອົງການຈັດຕັ້ງພັກ-ລັດ.

## ໝວດທີ 2
## ແຫຼ່ງລາຍຮັບ ແລະ ການນຳໃຊ້ກອງທຶນ

### ມາດຕາ 6 ແຫຼ່ງລາຍຮັບຂອງກອງທຶນ (ປັບປຸງ)

1. ຮັບຈາກສ່ວນແບ່ງຄັງແຮຂອງແຂວງ, ເມືອງ ແລະ ເງິນເກີນແຜນແຕ່ລະປີ ຕາມການຕົກລົງຂອງການນຳແຂວງ ແລະ ເມືອງ;
2. ຮັບຈາກການປະກອບສ່ວນພັນທະຂອງບຸກຄົນ, ນິຕິບຸກຄົນ, ລັດວິສາຫະກິດ, ບໍລິສັດ, ວິສາຫະກິດຕ່າງໆ ແລະ ສາມາດຈ່າຍຫຼາຍກວ່າຕົວເລກທີ່ກຳນົດ ດັ່ງລຸ່ມນີ້:

| | | |
|---|---|---|
| 2.1 | ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ 30.000 ກີບ/ຄົນ/ປີ; (ຍົກເວັ້ນການເສຍຢູ່ຂັ້ນບ້ານ) | |
| 2.2 | ພະນັກງານວິສາຫະກິດລັດ ແລະ ເອກະຊົນ 50.000 ກີບ/ຄົນ/ປີ; (ຍົກເວັ້ນການເສຍຢູ່ຂັ້ນບ້ານ) | |
| 2.3 | ບໍລິສັດມະຫາຊົນທັງພາຍໃນ ແລະ ຕ່າງປະເທດ | 500.000 ກີບ/ທະບຽນ/ປີ; |
| 2.4 | ວິສາຫະກິດຮຸ້ນສ່ວນ | 400.000 ກີບ/ທະບຽນ/ປີ; |
| 2.5 | ບໍລິສັດຈຳກັດ | 300.000 ກີບ/ທະບຽນ/ປີ; |
| 2.6 | ບໍລິສັດຈຳກັດຜູ້ດຽວ | 200.000 ກີບ/ທະບຽນ/ປີ; |
| 2.7 | ວິສາຫະກິດສ່ວນບຸກຄົນ | 50.000 ກີບ/ທະບຽນ/ປີ; |
| 2.8 | ປະຊາຊົນທົ່ວໄປ | 8.000 ກີບ/ຄົວເຮືອນ/ປີ. |

ກໍລະນີບຸກຄົນ ຫຼື ຄົວເຮືອນທີ່ປະສົບເຄາະຮ້າຍຈາກໄພພິບັດແມ່ນຈະຍົກເວັ້ນການປະກອບເງິນເຂົ້າກອງທຶນໃນປີນັ້ນ ແລະ ຄົວເຮືອນທີ່ທຸກຍາກທີ່ສຸດແມ່ນໃຫ້ຢັ້ງຢືນຈາກອົງການປົກຄອງບ້ານ ເພື່ອຍົກເວັ້ນການປະກອບເງິນເຂົ້າກອງທຶນ.

3. ຮັບຈາກການປະກອບສ່ວນດ້ວຍຄວາມສະໝັກໃຈຈາກບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງພັກ-ລັດ, ອົງການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ເປັນເງິນສົດ ຫຼື ວັດຖຸ;
4. ຮັບຈາກອັດຕາດອກເບ້ຍເງິນຝາກຂອງກອງທຶນ;
5. ຮັບຈາກການຈັດກິດຈະກຳຫາລາຍໄດ້ ແລະ ແຫຼ່ງທຶນອື່ນໆ ທີ່ຖືກຕ້ອງຕາມກົດໝາຍ.

### ມາດຕາ 7 ການນຳໃຊ້ເງິນກອງທຶນ (ໃໝ່)

ກອງທຶນຄຸ້ມຄອງໄພພິບັດ ແລະ ສັງຄົມສົງເຄາະ ນຳໃຊ້ເຂົ້າໃນເປົ້າໝາຍດັ່ງນີ້:

1. ການຊ່ວຍເຫຼືອສຸກເສີນ ເປັນຕົ້ນແມ່ນ: ການກູ້ໄພ, ການຊອກຄົ້ນ, ຄົ້ນຫາ ຜູ້ທີ່ໄດ້ຮັບເຄາະຮ້າຍຈາກໄພພິບັດຕ່າງໆ ທີ່ຮ້າຍແຮງ, ຈັດສັນທີ່ພັກອາໄສຊົ່ວຄາວ, ອາຫານ, ນໍ້າດື່ມ, ນໍ້າໃຊ້, ເຄື່ອງນຸ່ງຫົ່ມ, ເງິນອຸດໜູນເສຍຊີວິດ, ການຈັດສົ່ງ, ແຈກຢາຍເຄື່ອງຊ່ວຍເຫຼືອບັນເທົາທຸກສຸກເສີນ, ການຕັ້ງສູນບັນຊາການສຸກເສີນ ຢູ່ຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນບ້ານ ບ່ອນເກີດໄພພິບັດ;
2. ການຟື້ນຟູຫຼັງໄພພິບັດ ເປັນການຊ່ວຍເຫຼືອເຄື່ອງອຸປະໂພກ-ບໍລິໂພກ, ອຸປະກອນສິມທິບປຸກສ້າງ;
3. ການປະເມີນຜົນເສຍຫາຍ ແລະ ຄວາມຕ້ອງການຮີບດ່ວນ ເບື້ອງຕົ້ນ, ການຈັດຊື້ອຸປະກອນຮັບໃຊ້ທີ່ຈຳເປັນ ໃນການຮັບໃຊ້ວຽກງານສຸກເສີນ ແລະ ວຽກງານຊຸກຍູ້ແກ້ໄຂໃນເວລາເກີດໄພພິບັດສຸກເສີນ;
4. ການຊ່ວຍເຫຼືອຜູ້ດ້ອຍໂອກາດທາງສັງຄົມ ເປັນຕົ້ນແມ່ນເຄື່ອງນຸ່ງຫົ່ມ, ເຄື່ອງອຸປະໂພກ-ບໍລິໂພກ ແລະ ອຸປະກອນສິມທິບປຸກສ້າງ;
5. ນຳໃຊ້ເປັນເງິນບໍລິຫານຕາມການຕົກລົງຂອງສະພາບໍລິຫານກອງທຶນຂັ້ນແຂວງ ແລະ ຂັ້ນເມືອງ .

**ມາດຕາ 8 ການຖອນເງິນກອງທຶນ (ໃໝ່)**

ການຖອນເງິນກອງທຶນຈາກບັນຊີເງິນຝາກຂອງກອງທຶນ ຕ້ອງຖອນດ້ວຍແຊັກຂອງຄັງເງິນ ທີ່ມີລາຍເຊັນຂອງປະທານຄະນະກຳມະການຄຸ້ມຄອງໄພພິບັດ ຫຼື ຜູ້ທີ່ຖືກມອບສິດ ຈາກປະທານຄະນະກຳມະການຄຸ້ມຄອງໄພພິບັດຂັ້ນຂອງຕົນ ຈຶ່ງສາມາດຖອນເງິນອອກໄດ້.

ການຖອນເງິນອອກຈາກບັນຊີເງິນຝາກຂອງກອງທຶນບໍ່ໃຫ້ເກີນລາຍຮັບທັງໝົດຂອງກອງທຶນ ໃນແຕ່ລະປີງົບປະມານ. ການຖອນເງິນກອງທຶນແມ່ນບໍ່ສາມາດຖອນໄດ້ທັງໝົດ ແລະ ຕ້ອງໃຫ້ມີເງິນແຮໄວ້ຢ່າງໜ້ອຍສາມສິບສ່ວນຮ້ອຍຂອງກອງທຶນ.

**ມາດຕາ 9 ສິດໃນການສັ່ງຈ່າຍ (ໃໝ່)**

ຜູ້ມີສິດໃນການສັ່ງຈ່າຍເງິນກອງທຶນຄຸ້ມຄອງໄພພິບັດ ແລະ ສັງຄົມສົງເຄາະ ມີດັ່ງນີ້:

1. ຂັ້ນແຂວງ ແມ່ນປະທານຄະນະກຳມະການຄຸ້ມຄອງໄພພິບັດ ຂັ້ນແຂວງ ຫຼື ຜູ້ຖືກມອບສິດ;
2. ຂັ້ນເມືອງ ແມ່ນປະທານຄະນະກຳມະການຄຸ້ມຄອງໄພພິບັດ ຂັ້ນເມືອງ ຫຼື ຜູ້ຖືກມອບສິດ.

ໃນກໍລະນີສຸກເສີນ ຄະນະກຳມະການຄຸ້ມຄອງໄພພິບັດ ແລະ ສັງຄົມສົງເຄາະ ສາມາດສັ່ງຈ່າຍເງິນກອງທຶນໂດຍກົງເຂົ້າໃນການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກໄພພິບັດ ແລະ ຜູ້ດ້ອຍໂອກາດທາງສັງຄົມ ໃນຂັ້ນຂອງຕົນ.

## ໝວດທີ 3
## ເປົ້າໝາຍ, ວິທີການ, ຮູບການ ແລະ ເງື່ອນໄຂໄດ້ຮັບການຊ່ວຍເຫຼືອ

**ມາດຕາ 10 ເປົ້າໝາຍ (ປັບປຸງ)**

ພະນັກງານລັດຖະກອນ, ທະຫານ, ຕຳຫຼວດ, ບຸກຄົນ, ປະຊາຊົນ ແລະ ຄົນຕ່າງດ້າວອາໄສຢູ່ແຂວງອຸດົມໄຊ ທີ່ປະສົບເຄາະຮ້າຍຈາກໄພພິບັດຕ່າງໆຢ່າງຮ້າຍແຮງ ແລະ ຜູ້ດ້ອຍໂອກາດທາງສັງຄົມເຊັ່ນ: ອັກຄີໄພ, ລົມພະຍຸພັດ, ຟ້າຜ່າ, ນ້ຳຖ້ວມ, ດິນເຊາະເຈື່ອນ, ແຜ່ນດິນໄຫວ, ໄພແຫ້ງແລ້ງ, ໄພໜາວ, ສັດຕູພືດທຳລາຍ, ສັດປ່າທຳລາຍ; ເດັກກຳພ້າ-ກຳພອຍ, ຄົນເລລ້ອນ, ຄົນຂໍທານ, ເດັກພິການທາງດ້ານຮ່າງກາຍ ຫຼື ມັນສະໝອງບໍ່ສາມາດກຸ້ມຕົນເອງໄດ້, ຜູ້ອາຍຸສູງ ຫົກສິບປີ ຂຶ້ນໄປທີ່ປ່ຽວພອຍ, ທຸກຍາກ ຫຼື ອາໄສຢູ່ນຳຄອບຄົວທຸກຍາກ, ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ມີອາຍຸຕ່ຳກວ່າ ສິບແປດປີ.

**ມາດຕາ 11 ວິທີການຊ່ວຍເຫຼືອ (ປັບປຸງ)**

ວິທີການຊ່ວຍເຫຼືອປະກອບມີ 2 ວິທີຄື:

1. ຊ່ວຍເຫຼືອສຸກເສີນ ແມ່ນການຊ່ວຍເຫຼືອໂດຍທັນທີໃຫ້ແກ່ຜູ້ປະສົບເຄາະຮ້າຍຈາກໄພພິບັດ ແລະ ຜູ້ດ້ອຍໂອກາດທີ່ເກີດຂຶ້ນ ໃຫ້ທັນເວລາ;
2. ຊ່ວຍເຫຼືອຟື້ນຟູ ແມ່ນການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍຈາກໄພພິບັດ ແລະ ຜູ້ດ້ອຍໂອກາດ ຫຼັງໄດ້ຮັບຂໍ້ມູນລະອຽດຈາກພາກສ່ວນທີ່ກ່ຽວຂ້ອງ.

**ມາດຕາ 12 ຮູບການຊ່ວຍເຫຼືອ (ປັບປຸງ)**

ຮູບການຊ່ວຍເຫຼືອປະກອບມີ:

1. ຊ່ວຍເປັນເງິນ ຫຼື ວັດຖຸ;
2. ຊ່ວຍຍົກຍ້າຍໄປຢູ່ສະຖານທີ່ປອດໄພ ຫຼື ບ່ອນຈັດສັນທີ່ພັກຊົ່ວຄາວ;

3. ຊ່ວຍເບິ່ງແຍງ, ລ້ຽງດູຊີວິດການເປັນຢູ່ ແລະ ສຸຂະພາບ;

4. ຊ່ວຍຝຶກອົບຮົມຝຶກວິຊາຊີບ, ພັດທະນາສີມືແຮງງານ ແລະ ຈັດຫາວຽກເຮັດງານທຳ.

**ມາດຕາ 13 ເງື່ອນໄຂຜູ້ທີ່ຈະໄດ້ຮັບການຊ່ວຍເຫຼືອ (ປັບປຸງ)**

1. ຜູ້ທີ່ຈະໄດ້ຮັບການຊ່ວຍເຫຼືອຕ້ອງແມ່ນບຸກຄົນ, ນິຕິບຸກຄົນ, ຄອບຄົວ, ຄົນຕ່າງດ້າວ ແລະ ຄົນຕ່າງປະເທດທີ່ອາໄສ ຫຼື ດຳເນີນທຸລະກິດຢູ່ແຂວງອຸດົມໄຊທີ່ປະສົບເຄາະຮ້າຍຈາກໄພພິບັດຕ່າງໆຊຶ່ງມີຄວາມເສຍຫາຍ ຫົກສິບສ່ວນຮ້ອຍຂອງມູນຄ່າເສຍຫາຍຕົວຈິງ;
2. ຜູ້ທີ່ເສຍຊີວິດຈາກເຫດການໄພພິບັດເຊັ່ນ: ໄພນ້ຳຖ້ວມ, ລົມພະຍຸພັດ, ຟ້າຜ່າ, ໄພໜາວ, ສັດປ່າທຳລາຍ ແລະ ອັກຄີໄພ;
3. ຜູ້ດ້ອຍໂອກາດທາງສັງຄົມ ເຊັ່ນ: ເດັກກຳພ້າ-ກຳພອຍ, ຄົນເລລ້ອນ, ຄົນຂໍທານ, ຜູ້ເຖົ້າປ່ຽວພອຍອາຍຸຫົກສິບປີຂຶ້ນໄປ ທີ່ທຸກຍາກ ຫຼື ອາໄສຢູ່ນຳຄອບຄົວທຸກຍາກ ແລະ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດທີ່ມີອາຍຸຕ່ຳກວ່າສິບແປດປີ;
4. ການປະກອບເອກະສານ ແລະ ຢັ້ງຢືນໃນການຊ່ວຍເຫຼືອ ມີດັ່ງນີ້:
    1) ຄຳຮ້ອງທຸກຂອງຜູ້ປະສົບເຄາະຮ້າຍ ຫຼື ຕົວແທນ ກໍລະນີຜູ້ກ່ຽວບໍ່ສາມາດຂຽນດ້ວຍຕົນເອງໄດ້;
    2) ໃບຢັ້ງຢືນຈາກນາຍບ້ານ;
    3) ແບບຟອມປະເມີນຜົນເສຍຫາຍຈາກໄພພິບັດຕ່າງໆ;
    4) ຕາຕະລາງສັງລວມລາຍຊື່ຫົວໜ້າຄອບຄົວ ແລະ ຊື່ບ້ານເພື່ອຂໍການຊ່ວຍເຫຼືອ; (ຕາມແບບຟອມ)
    5) ໜັງສືສະເໜີຂອງຫົວໜ້າຫ້ອງການແຮງງານ ແລະສະຫວັດດີການສັງຄົມເມືອງ;
    6) ໜັງສືສະເໜີຂອງທ່ານເຈົ້າເມືອງ;
    7) ການຊ່ວຍເຫຼືອຕ້ອງນຳໃຊ້ແບບຟອມ. (ມີແບບຟອມລົງລາຍເຊັນຮັບໃນແຕ່ລະຄອບຄົວ)

**ມາດຕາ 14 ປະເພດສົງເຄາະ (ໃໝ່)**

ການສົງເຄາະປະກອບມີ 4 ປະເພດຄື:

1. ການຈັດຫາ ແລະ ສົມທົບປຸກສ້າງທີ່ຢູ່ອາໄສ;
2. ການຊ່ວຍເຫຼືອເຄື່ອງອຸປະໂພກ-ບໍລິໂພກ;
3. ການຊ່ວຍເຫຼືອຝຶກວິຊາຊີບ, ພັດທະນາສີມືແຮງງານ ແລະ ຈັດຫາວຽກເຮັດງານທຳ;
4. ການຊ່ວຍເຫຼືອເງິນອຸດໜູນສິ່ງສະການ.

## ໝວດທີ 4

## ທີ່ຕັ້ງ ແລະ ໂຄງປະກອບສະພາບໍລິຫານກອງທຶນຄຸ້ມຄອງໄພພິບັດ ແລະ ສັງຄົມສົງເຄາະ

**ມາດຕາ 15 ທີ່ຕັ້ງຂອງກອງທຶນ (ໃໝ່)**

1. ຂັ້ນແຂວງ ຕັ້ງຢູ່ ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ;
2. ຂັ້ນເມືອງ ຕັ້ງຢູ່ ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ.

ກອງທຶນຄຸ້ມຄອງໄພພິບັດ ແລະ ສັງຄົມສົງເຄາະ ໃນແຕ່ລະຂັ້ນມີສະພາບໍລິຫານກອງທຶນ ແລະ ກອງເລຂາຂອງທຶນ.

**ມາດຕາ 16 ສະພາບໍລິຫານກອງທຶນ (ໃໝ່)**

ສະພາບໍລິຫານກອງທຶນແມ່ນການຈັດຕັ້ງສູງສຸດຂອງກອງທຶນຮັບຜິດຊອບເຄື່ອນໄຫວວຽກງານຂອງກອງທຶນ.

ສະພາບໍລິຫານກອງທຶນປະກອບດ້ວຍປະທານ, ຮອງປະທານ ແລະ ກຳມະການຈຳນວນໜຶ່ງທີ່ມາຈາກຂະແໜງການທີ່ກ່ຽວຂ້ອງຊຶ່ງຖືກແຕ່ງຕັ້ງໂດຍປະທານຄະນະກຳມະການຄຸ້ມຄອງໄພພິບັດແຕ່ລະຂັ້ນ.

**ມາດຕາ 17 ໂຄງປະກອບບຸກຄະລາກອນສະພາບໍລິຫານກອງທຶນຂັ້ນແຂວງ (ໃໝ່)**

ສະພາບໍລິຫານກອງທຶນຂັ້ນແຂວງ ປະກອບດ້ວຍ:

1. ຫົວໜ້າ ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ ເປັນປະທານ;
2. ຮອງຫົວໜ້າ ຫ້ອງວ່າການແຂວງ (ຜູ້ຊີ້ນຳວຽກງານຄົ້ນຄ້ວາສັງລວມ) ເປັນຮອງປະທານ;
3. ຮອງຫົວໜ້າ ພະແນກແຜນການ ແລະ ການລົງທຶນແຂວງ (ຜູ້ຊີ້ນຳວຽກງານແຜນການ) ເປັນກຳມະການ;
4. ຮອງຫົວໜ້າ ພະແນກການເງິນແຂວງ (ຜູ້ຊີ້ນຳວຽກງານງົບປະມານ) ເປັນກຳມະການ;
5. ຮອງຫົວໜ້າ ພະແນກຖະແຫຼງຂ່າວ, ວັດທະນາທຳ ແລະ ທ່ອງທ່ຽວ (ຜູ້ຊີ້ນຳວຽກງານຖະແຫຼງຂ່າວ ແລະ ສື່ມວນຊົນ) ເປັນກຳມະການ;
6. ຮອງຫົວໜ້າ ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ ເປັນກຳມະການ;
7. ຫົວໜ້າ ຂະແໜງສັງຄົມສົງເຄາະ, ພະແນກແຮງງານ ແລະສະຫວັດດີການສັງຄົມ ເປັນກຳມະການ.

**ມາດຕາ 18 ໂຄງປະກອບບຸກຄະລາກອນກອງເລຂາກອງທຶນຂັ້ນແຂວງ (ໃໝ່)**

ບຸກຄະລາກອນກອງເລຂາກອງທຶນ ຂັ້ນແຂວງ ປະກອບດ້ວຍ:

1. ຮອງຫົວໜ້າ ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ (ຜູ້ຊີ້ນຳວຽກງານສະຫວັດດີການສັງຄົມ) ເປັນຫົວໜ້າ;
2. ຫົວໜ້າ ຂະແໜງສັງຄົມສົງເຄາະ, ພະແນກແຮງງານ ແລະ ສະຫວັດດີການສັງຄົມ ເປັນຮອງ;
3. ຫົວໜ້າ ຂະແໜງຄົ້ນຄວ້າ-ສັງລວມ, ຫ້ອງວ່າການແຂວງ ເປັນຄະນະ;
4. ຫົວໜ້າ ຂະແໜງແຜນການ, ພະແນກແຜນການ ແລະ ການລົງທຶນ ເປັນຄະນະ;
5. ຫົວໜ້າ ຂະແໜງງົບປະມານ, ພະແນກການເງິນແຂວງ ເປັນຄະນະ;
6. ຫົວໜ້າ ຂະແໜງບໍລິການຄັງເງິນ, ຄັງເງິນປະຈຳແຂວງ ເປັນຄະນະ;
7. ຫົວໜ້າ ຂະແໜງຖະແຫຼງຂ່າວ ແລະ ສື່ມວນຊົນ, ພະແນກ ຖວທ ແຂວງ ເປັນຄະນະ;
8. ວິຊາການ ຂະແໜງສັງຄົມສົງເຄາະ, ພະແນກ ຮສສ ແຂວງ ເປັນຄະນະ.

**ມາດຕາ 19 ໂຄງປະກອບບຸກຄະລາກອນສະພາບໍລິຫານກອງທຶນຂັ້ນເມືອງ (ໃໝ່)**

ສະພາບໍລິຫານກອງທຶນຂັ້ນເມືອງ ປະກອບດ້ວຍ:

1. ຫົວໜ້າ ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ ເປັນປະທານ;
2. ຮອງຫົວໜ້າ ຫ້ອງວ່າການເມືອງ ເປັນຮອງປະທານ;
3. ຮອງຫົວໜ້າ ຫ້ອງການແຜນການ ແລະ ການລົງທຶນເມືອງ ເປັນກາມະການ;
4. ຮອງຫົວໜ້າ ຫ້ອງການການເງິນເມືອງ ເປັນກາມະການ;
5. ຮອງຫົວໜ້າ ຫ້ອງການຖະແຫຼງຂ່າວ, ວັດທະນາທຳ ແລະ ທ່ອງທ່ຽວເມືອງ ເປັນກຳມະການ;
6. ຮອງຫົວໜ້າ ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ ເປັນກຳມະການ;
7. ຫົວໜ້າ ໜ່ວຍງານສະຫວັດດີການສັງຄົມ, ຫ້ອງການ ຮສສ ເມືອງ ເປັນກຳມະການ.

**ມາດຕາ 20 ໂຄງປະກອບບຸກຄະລາກອນກອງເລຂາກອງທຶນຂັ້ນເມືອງ (ໃໝ່)**

ບຸກຄະລາກອນກອງເລຂາກອງທຶນ ຂັ້ນເມືອງ ປະກອບດ້ວຍ:

1. ຮອງຫົວໜ້າ ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ ເປັນຫົວໜ້າ;
2. ຫົວໜ້າ ໜ່ວຍງານສະຫວັດດີການສັງຄົມ, ຫ້ອງການ ຮສສ ເມືອງ ເປັນຮອງ;
3. ຫົວໜ້າ ໜ່ວຍງານບໍລິຫານ, ຫ້ອງວ່າການເມືອງ ເປັນຄະນະ;
4. ຫົວໜ້າ ໜ່ວຍງານແຜນການ, ຫ້ອງການແຜນການ ແລະ ການລົງທຶນເມືອງ ເປັນຄະນະ;
5. ຫົວໜ້າ ໜ່ວຍງານງົບປະມານ, ຫ້ອງການການເງິນເມືອງ ເປັນຄະນະ;
6. ຫົວໜ້າ ໜ່ວຍງານບໍລິການຄັງເງິນ, ຄັງເງິນປະຈຳເມືອງ ເປັນຄະນະ;
7. ຫົວໜ້າ ໜ່ວຍງານຖະແຫຼງຂ່າວ ແລະ ສື່ມວນຊົນ, ຫ້ອງການ ຖວທ ເປັນຄະນະ;
8. ວິຊາການ ໜ່ວຍງານສະຫວັດດີການສັງຄົມ, ຫ້ອງການ ຮສສ ເມືອງ ເປັນຄະນະ.

## ໝວດທີ 5

## ສິດ ແລະ ໜ້າທີ່ສະພາບໍລິຫານກອງທຶນ ແລະ ກອງເລຂາຂອງສະພາບໍລິຫານກອງທຶນ

**ມາດຕາ 21 ສິດ ແລະ ໜ້າທີ່ ຂອງສະພາບໍລິຫານກອງທຶນຂັ້ນແຂວງ (ໃໝ່)**

ສະພາບໍລິຫານກອງທຶນຂັ້ນແຂວງ ມີສິດ ແລະ ໜ້າທີ່ ຕາມຂອບເຂດຮັບຜິດຊອບຂອງຕົນດັ່ງນີ້:

1. ຄຸ້ມຄອງບໍລິຫານກອງທຶນຄຸ້ມຄອງໄພພິບັດ ແລະ ສັງຄົມສົງເຄາະ ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດນະໂຍບາຍ, ແຜນຍຸດທະສາດ, ຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງໄພພິບັດ ຂັ້ນແຂວງ, ລະບຽບການຂອງກອງທຶນ ແລະ ລະບຽບການທີ່ກ່ຽວຂ້ອງ;
2. ພິຈາລະນາແຜນການ ແລະ ແຜນງົບປະມານ ການເຄື່ອນໄຫວປະຈຳປີຂອງກອງທຶນ ເພື່ອນຳສະເໜີຕໍ່ຄະນະກຳມະການຄຸ້ມຄອງໄພພິບັດຂັ້ນແຂວງ ຕົກລົງ ແລະ ຮັບຮອງເອົາ;
3. ປຸກລະດົມຂົນຂວາຍຊອກຫາແຫຼ່ງທຶນຈາກບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ເພື່ອປະກອບສ່ວນເງິນເຂົ້າກອງທຶນ;
4. ຄົ້ນຄວ້າ ແລະ ສ້າງລະບຽບການ ກ່ຽວກັບການຄຸ້ມຄອງ, ການນຳໃຊ້ເງິນກອງທຶນຄຸ້ມຄອງໄພພິບັດ ແລະ ສັງຄົມສົງເຄາະ ຂັ້ນແຂວງ;
5. ສະເໜີ ແຕ່ງຕັ້ງ ຫຼື ປົດຕຳແໜ່ງ ບຸກຄະລາກອນຂອງກອງເລຂາກອງທຶນ;
6. ຕິດຕາມ ກວດກາ, ຄຸ້ມຄອງການເຄື່ອນໄຫວ ແລະ ນຳໃຊ້ກອງທຶນ ໃຫ້ສອດຄ່ອງກັບເປົ້າໝາຍນຳໃຊ້ຕາມແຜນການ, ມີຄວາມໂປ່ງໃສ ແລະ ມີປະສິດທິຜົນສູງ;
7. ສະຫຼຸບລາຍງານສະພາບການເຄື່ອນໄຫວວຽກງານຮອບດ້ານຂອງກອງທຶນໃຫ້ຄະນະກຳມະການຄຸ້ມຄອງໄພພິບັດ ປະຈຳເດືອນ, ໄຕມາດ, 6 ເດືອນ ແລະ ປະຈຳປີ;
8. ຮັບຮອງບົດລາຍງານຜົນການກວດສອບດ້ານການເງິນຂອງກອງທຶນ;
9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນຕາມກົດໝາຍ ແລະ ການມອບໝາຍຂອງຄະນະກຳມະການຄຸ້ມຄອງໄພພິບັດຂັ້ນແຂວງ.

**ມາດຕາ 22 ສິດ ແລະ ໜ້າທີ່ຂອງກອງເລຂາສະພາບໍລິຫານກອງທຶນຂັ້ນແຂວງ (ໃໝ່)**

ກອງເລຂາກອງທຶນ ຂັ້ນແຂວງ ມີສິດ ແລະ ໜ້າທີ່ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ມີດັ່ງນີ້:

1. ສ້າງແຜນງານ, ໂຄງການ ແລະ ແຜນງົບປະມານ ຮັບໃຊ້ການເຄື່ອນໄຫວ ແລະ ລະດົມທຶນເຂົ້າກອງທຶນ ປະຈຳ 6 ເດືອນ ແລະ ປະຈຳປີ ສະເໜີຕໍ່ສະພາບໍລິຫານ ເພື່ອພິຈາລະນາຮັບຮອງເອົາ ແລະ ສະເໜີຄະນະກຳມະການຄຸ້ມຄອງໄພພິບັດ ອະນຸມັດ;
2. ສ້າງລະບຽບພາຍໃນຂອງກອງທຶນ ເພື່ອສະເໜີຕໍ່ສະພາບໍລິຫານ;
3. ຄຸ້ມຄອງບໍລິຫານ ການເຄື່ອນໄຫວວຽກງານປະຈຳວັນ ຂອງກອງທຶນ ໂດຍສອດຄ່ອງກັບແຜນການດ້ວຍຄວາມໂປ່ງໃສ ແລະ ມີປະສິທິຜົນສູງ;
4. ຈັດຕັ້ງກິດຈະກຳຊອກຫາແຫຼ່ງທຶນເພື່ອລະດົມທຶນເຂົ້າກອງທຶນ;
5. ຄຸ້ມຄອງຊັບສິນ, ເງິນສົດ ແລະ ບັນຊີເງິນຝາກຂອງກອງທຶນ;
6. ເບີກຈ່າຍເງິນ ແລະ ວັດຖຸອຸປະກອນ ເພື່ອສະໜອງໃຫ້ແກ່ກິດຈະກຳຕ່າງໆ ຕາມແຜນການຂອງສະພາບໍລິຫານກອງທຶນໄດ້ຮັບຮອງ;
7. ຕິດຕາມ, ກວດກາປະເມີນຜົນການນຳໃຊ້ກອງທຶນ;
8. ສະຫຼຸບ ແລະ ລາຍງານສະພາບການເຄື່ອນໄຫວວຽກງານຮອບດ້ານຂອງກອງທຶນ ຕໍ່ສະພາບໍລິຫານກອງທຶນ ແລະ ຄະນະກຳມະການຄຸ້ມຄອງໄພພິບັດຂັ້ນແຂວງ ຢ່າງເປັນປົກກະຕິ;
9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ຕາມການມອບໝາຍຂອງສະພາບໍລິຫານ ແລະ ຄະນະກຳມະການຄຸ້ມຄອງໄພພິບັດຂັ້ນແຂວງ;

**ມາດຕາ 23 ສິດ ແລະ ໜ້າທີ່ ຂອງສະພາບໍລິຫານກອງທຶນຂັ້ນເມືອງ (ໃໝ່)**

ສະພາບໍລິຫານກອງທຶນຂັ້ນເມືອງ ມີສິດ ແລະ ໜ້າທີ່ ຕາມຂອບເຂດຮັບຜິດຊອບຂອງຕົນດັ່ງນີ້:

1. ຄຸ້ມຄອງບໍລິຫານກອງທຶນຄຸ້ມຄອງໄພພິບັດ ແລະ ສັງຄົມສົງເຄາະ ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດນະໂຍບາຍ, ແຜນຍຸດທະສາດ, ຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງໄພພິບັດ ຂັ້ນເມືອງ, ລະບຽບການຂອງກອງທຶນ ແລະ ບຽບການທີ່ກ່ຽວຂ້ອງ;
2. ພິຈາລະນາແຜນການ ແລະ ແຜນງົບປະມານ ການເຄື່ອນໄຫວປະຈຳປີຂອງກອງທຶນ ເພື່ອນຳສະເໜີຕໍ່ຄະນະກຳມະການຄຸ້ມຄອງໄພພິບັດຂັ້ນເມືອງ ຕົກລົງ ແລະ ຮັບຮອງເອົາ;
3. ລະດົມຂົນຂວາຍຊອກຫາແຫຼ່ງທຶນຈາກບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ເພື່ອປະກອບເງິນເຂົ້າກອງທຶນ;
4. ສະເໜີ ແຕ່ງຕັ້ງ ຫຼື ປົດຕຳແໜ່ງ ບຸກຄະລາກອນຂອງກອງເລຂາກອງທຶນ;
5. ຕິດຕາມ, ກວດກາ, ຄຸ້ມຄອງການເຄື່ອນໄຫວ ແລະ ນຳໃຊ້ກອງທຶນ ໃຫ້ສອດຄ່ອງກັບເປົ້າໝາຍນຳໃຊ້ຕາມແຜນການ, ມີຄວາມໂປ່ງໃສ ແລະ ມີປະສິດທິຜົນສູງ;
6. ສະຫຼຸບລາຍງານສະພາບການເຄື່ອນໄຫວວຽກງານຮອບດ້ານຂອງກອງທຶນໃຫ້ຄະນະກຳມະການຄຸ້ມຄອງໄພພິບັດ ປະຈຳເດືອນ, ໄຕມາດ, 6 ເດືອນ ແລະ ປະຈຳປີ;
7. ຮັບຮອງບົດລາຍງານຜົນການກວດສອບດ້ານການເງິນຂອງກອງທຶນ;
8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນຕາມກົດໝາຍ ແລະ ການມອບໝາຍຂອງຄະນະກຳມະການຄຸ້ມຄອງໄພພິບັດຂັ້ນເມືອງ.

**ມາດຕາ 24 ສິດ ແລະ ໜ້າທີ່ຂອງກອງເລຂາສະພາບໍລິຫານກອງທຶນຂັ້ນເມືອງ (ໃໝ່)**

ກອງເລຂາກອງທຶນ ຂັ້ນເມືອງ ມີສິດ ແລະ ໜ້າທີ່ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ມີດັ່ງນີ້:

1. ສ້າງແຜນງານ, ໂຄງການ ແລະ ແຜນງົບປະມານ ຮັບໃຊ້ການເຄື່ອນໄຫວ ແລະ ລະດົມທຶນເຂົ້າກອງທຶນ ປະຈໍາ 6 ເດືອນ ແລະ ປະຈໍາປີ ສະເໜີຕໍ່ສະພາບໍລິຫານ ເພື່ອພິຈາລະນາຮັບຮອງເອົາ ແລະ ສະເໜີຄະນະກໍາມະການຄຸ້ມຄອງໄພພິບັດ ອະນຸມັດ;
2. ຄຸ້ມຄອງບໍລິຫານ ການເຄື່ອນໄຫວວຽກງານປະຈໍາວັນ ຂອງກອງທຶນ ໂດຍສອດຄ່ອງກັບແຜນການດ້ວຍຄວາມໂປ່ງໃສ ແລະ ມີປະສິດທິຜົນສູງ;
3. ຈັດຕັ້ງກິດຈະກໍາຊອກຫາແຫຼ່ງທຶນເພື່ອລະດົມທຶນເຂົ້າກອງທຶນ;
4. ຄຸ້ມຄອງຊັບສິນ, ເງິນສົດ ແລະ ບັນຊີເງິນຝາກຂອງກອງທຶນ;
5. ເບີກຈ່າຍເງິນ ແລະ ວັດຖຸອຸປະກອນ ເພື່ອສະໜອງໃຫ້ແກ່ກິດຈະກໍາຕ່າງໆ ຕາມແຜນການຂອງສະພາບໍລິຫານກອງທຶນໄດ້ຮັບຮອງ;
6. ຕິດຕາມ, ກວດກາ ແລະປະເມີນຜົນການນໍາໃຊ້ເງິນກອງທຶນ;
7. ສະຫຼຸບ ແລະ ລາຍງານສະພາບການເຄື່ອນໄຫວວຽກງານຮອບດ້ານຂອງກອງທຶນ ຕໍ່ສະພາບໍລິຫານກອງທຶນ ແລະ ຄະນະກໍາມະການຄຸ້ມຄອງໄພພິບັດຂັ້ນເມືອງ ຢ່າງເປັນປົກກະຕິ;
8. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນຕາມກົດໝາຍ ແລະ ຕາມການມອບໝາຍຂອງສະພາບໍລິຫານ ແລະ ຄະນະກໍາມະການຄຸ້ມຄອງໄພພິບັດຂັ້ນເມືອງ.

**ມາດຕາ 25 ກອງປະຊຸມສະພາບໍລິຫານວຽກງານກອງທຶນ (ໃໝ່)**

ກອງປະຊຸມສາມັນ ຂອງສະພາບໍລິຫານ ຈັດຂຶ້ນປີລະ 2 ຄັ້ງ ໃນກໍລະນີມີບັນຫາສໍາຄັນທີ່ຕ້ອງໄດ້ປຶກສາຫາລື ແລະ ພິຈາລະນາຕົກລົງດ່ວນ ກໍ່ສາມາດຈັດກອງປະຊຸມວິສາມັນຂຶ້ນໄດ້ທຸກເວລາ ຕາມການຮຽກປະຊຸມຂອງປະທານສະພາບໍລິຫານ ຫຼື ຕາມການສະເໜີຂອງສະມາຊິກສະພາບໍລິຫານ ແຕ່ສອງຄົນຂຶ້ນໄປ. ກອງປະຊຸມຈະເປີດໄດ້ ກໍ່ຕໍ່ເມື່ອມີສະມາຊິກສະພາບໍລິຫານເຂົ້າຮ່ວມຢ່າງໜ້ອຍສອງສ່ວນສາມ ຂອງຈໍານວນສະມາຊິກສະພາບໍລິຫານທັງໝົດ.

**ມາດຕາ 26 ກອງປະຊຸມສະຫຼຸບວຽກງານກອງທຶນ (ໃໝ່)**

ກອງປະຊຸມສະຫຼຸບວຽກງານກອງທຶນຄຸ້ມຄອງໄພພິບັດ ແລະ ສັງຄົມສົງເຄາະ ຈັດຂຶ້ນປີລະ 2 ຄັ້ງ ຄື: ກອງປະຊຸມສະຫຼຸບ ການຈັດຕັ້ງປະຕິບັດວຽກງານກອງທຶນ 6 ເດືອນຕົ້ນປີ ແລະ ສະຫຼຸບປະຈໍາປີ ໂດຍແຈ້ງເຊີນບັນດາ ຄະນະກໍາມະການຄຸ້ມຄອງໄພພິບັດຂັ້ນແຂວງ ແລະ ສະພາບໍລິຫານກອງທຶນຄຸ້ມຄອງໄພພິບັດ ແລະ ສັງຄົມສົງເຄາະ ເຂົ້າຮ່ວມ.

## ໝວດທີ 6
## ບັນຊີກອງທຶນ, ການກວດສອບ ແລະ ການສະຫຼຸບລາຍງານ

**ມາດຕາ 27 ບັນຊີກອງທຶນຄຸ້ມຄອງໄພພິບັດ ແລະ ສັງຄົມສົງເຄາະ (ໃໝ່)**

ກອງທຶນຄຸ້ມຄອງໄພພິບັດ ແລະ ສັງຄົມສົງເຄາະ ຕ້ອງມີລະບົບບັນຊີທີ່ຖືກຕ້ອງ ຕາມກົດໝາຍວ່າດ້ວຍບັນຊີ ແລະ ສາມາດເປີດບັນຊີເງິນຝາກຢູ່ທະນາຄານທຸລະກິດ ທີ່ມີຄວາມໝັ້ນຄົງ ແລະ ເຊື່ອຖືໄດ້ ຢູ່ ສປປ ລາວ ຕາມການຕົກລົງຂອງສະພາບໍລິຫານ.

**ມາດຕາ 28 ການກວດສອບບັນຊີກອງທຶນ (ໃໝ່)**

ບັນຊີກອງທຶນຄຸ້ມຄອງໄພພິບັດ ແລະ ສັງຄົມສົງເຄາະ ຕ້ອງໄດ້ຮັບການກວດສອບທຸກປີ ໂດຍອົງການກວດສອບແຫ່ງລັດ. ຜົນການກວດສອບຕ້ອງລາຍງານໃຫ້ປະທານຄະນະກຳມະການຄຸ້ມຄອງໄພພິບັດ ແຕ່ລະຂັ້ນ ແລະ ຖືກພິມເຜີຍແຜ່ໃຫ້ສາທາລະນະຊົນຮັບຊາບ ຕາມການອະນຸຍາດຈາກຄະນະກຳມະການຄຸ້ມຄອງໄພພິບັດແຕ່ລະຂັ້ນ.

**ມາດຕາ 29 ການສະຫຼຸບລາຍງານ (ໃໝ່)**

ກອງເລຂາກອງທຶນ ແຕ່ລະຂັ້ນ ຕ້ອງສົ່ງບົດລາຍງານການເຄື່ອນໄຫວຂອງກອງທຶນ ໃຫ້ສະພາບໍລິຫານຂັ້ນຂອງຕົນ ປະຈຳເດືອນ, ໄຕມາດ, 6 ເດືອນ ແລະ ປະຈຳປີ, ລາຍງານຕໍ່ກອງປະຊຸມຂອງອົງການປົກຄອງແຂວງ, ເມືອງ ແລະ ກອງປະຊຸມຂອງສະພາປະຊາຊົນແຂວງ ປະຈຳປີ.

## ໝວດທີ 7
## ອົງການຄຸ້ມຄອງກອງທຶນໄພພິບັດ ແລະ ສັງຄົມສົງເຄາະ

**ມາດຕາ 30 ອົງການຄຸ້ມຄອງກອງທຶນ (ປັບປຸງ)**

ອົງການຄຸ້ມຄອງກອງທຶນໄພພິບັດ ແລະ ສັງຄົມສົງເຄາະ

1. ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ;
2. ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ.

**ມາດຕາ 31 ສິດ ແລະ ໜ້າທີ່ຂອງອົງການຄຸ້ມຄອງກອງທຶນ (ພະແນກແຮງງານ ແລະ ສະຫວັດດີການສັງຄົມ) (ປັບປຸງ)**

ການຄຸ້ມຄອງກອງທຶນຄຸ້ມຄອງໄພພິບັດ ແລະ ສັງຄົມສົງເຄາະ ພະແນກແຮງງານ ແລະສະຫວັດດີການສັງຄົມ ມີສິດ ແລະ ໜ້າທີ ດັ່ງນີ້:

1. ຄົ້ນຄວ້ານະໂຍບາຍ, ສ້າງແຜນການ, ແຜນງານ, ຜັນຂະຫຍາຍ, ເຜີຍແຜ່ ຂໍ້ຕົກລົງກອງທຶນຄຸ້ມຄອງໄພພິບັດ ແລະ ສັງຄົມສົງເຄາະ, ບົດແນະນຳ, ແຈ້ງການຕ່າງໆ ໃຫ້ສັງຄົມຮັບຮູ້, ເຂົ້າໃຈຢ່າງເລິກເຊິ່ງ ແລະ ທົ່ວເຖິງ;
2. ຕິດຕາມ, ຊຸກຍູ້ ບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງພາກລັດ ແລະ ເອກະຊົນອ້ອມຂ້າງແຂວງ ແລະ 7 ເມືອງ ປະກອບເງິນເຂົ້າກອງທຶນຄຸ້ມຄອງໄພພິບັດ ແລະ ສັງຄົມສົງເຄາະ;
3. ນຳໃຊ້ເງິນກອງທຶນໃຫ້ຖືກຕ້ອງຕາມເປົ້າໝາຍທີ່ກຳນົດໄວ້ ໃນ ມາດຕາ 10 ຂອງຂໍ້ຕົກລົງສະບັບນີ້;
4. ຮັບພິຈາລະນາ ແລະ ແກ້ໄຂຄຳຮ້ອງທຸກ ຕາມສິດ ແລະ ໜ້າທີ່ຂອງຕົນ;
5. ຕິດຕາມ, ກວດກາ, ປະເມີນຜົນ ແລະ ສະຫຼຸບລາຍງານການນຳໃຊ້ເງິນກອງທຶນ ໃຫ້ປະທານຄະນະກຳມະການຄຸ້ມຄອງໄພພິບັດຂັ້ນແຂວງ ຮັບຊາບ ຕາມແຕ່ລະໄລຍະ.

**ມາດຕາ 32 ສິດ ແລະ ໜ້າທີ່ຂອງອົງການຄຸ້ມຄອງກອງທຶນ (ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມ) (ໃໝ່)**

ການຄຸ້ມຄອງກອງທຶນຄຸ້ມຄອງໄພພິບັດ ແລະ ສັງຄົມສົງເຄາະ ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເກັບກຳຂໍ້ມູນ, ສ້າງແຜນການ ແລະ ແຜນງົບປະມານນຳໃຊ້ເງິນກອງທຶນຄຸ້ມຄອງ ແລະ ສັງຄົມສົງເຄາະ;
2. ຕິດຕາມ, ຊຸກຍູ້ ບຸກຄົນ, ນິຕິບຸກຄົນ, ຄົວເຮືອນ, ອົງການຈັດຕັ້ງພາກລັດ ແລະ ເອກະຊົນອ້ອມຂ້າງເມືອງ ຂອງຕົນ ເພື່ອປະກອບເງິນເຂົ້າກອງທຶນຄຸ້ມຄອງໄພພິບັດ ແລະ ສັງຄົມສົງເຄາະ;

3. ຈັດຕັ້ງປະຕິບັດການຊ່ວຍເຫຼືອ ແລະ ການບໍລິການ;
4. ຮັບພິຈາລະນາ ແລະ ແກ້ໄຂຄໍາຮ້ອງທຸກ;
5. ຕິດຕາມ, ປະເມີນ ແລະ ສະຫຼຸບລາຍງານ.

## ໝວດທີ 8
## ອົງການກວດກາພາຍໃນ ແລະ ອົງການກວດກາພາຍນອກ

### ມາດຕາ 33 ອົງການກວດກາພາຍໃນ (ປັບປຸງ)

ອົງການກວດກາພາຍໃນ ປະກອບມີ:

1. ພະແນກແຮງງານ ແລະ ສະຫວັດດີການສັງຄົມ;
2. ຫ້ອງວ່າການແຂວງ;
3. ພະແນກແຜນການ ແລະ ການລົງທຶນ;
4. ພະແນກການເງິນ;
5. ພະແນກຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ.

### ມາດຕາ 34 ອົງການກວດກາພາຍນອກ (ປັບປຸງ)

ອົງການກວດກາພາຍນອກ ປະກອບມີ:

1. ສະພາປະຊາຊົນແຂວງ;
2. ອົງການກວດສອບ ປະຈໍາພາກເໜືອ;
3. ຄະນະກວດກາພັກ-ລັດ ຂັ້ນແຂວງ ແລະ ຂັ້ນເມືອງ;
4. ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ປະຊາຊົນ ແລະ ມວນຊົນຂັ້ນແຂວງ ແລະ ຂັ້ນເມືອງ.

### ມາດຕາ 35 ເນື້ອໃນການກວດກາ (ໃໝ່)

ເນື້ອໃນການກວດກາກອງທຶນຄຸ້ມຄອງໄພພິບັດ ແລະ ສັງຄົມສົງເຄາະ ມີດັ່ງນີ້:

1. ການຈັດຕັ້ງປະຕິບັດຫຼັກການ, ລະບຽບການ ແລະ ແຈ້ງການທີ່ກ່ຽວກັບກອງທຶນ;
2. ລາຍຮັບ-ລາຍຈ່າຍຂອງກອງທຶນຄຸ້ມຄອງໄພພິບັດ ແລະ ສັງຄົມສົງເຄາະ;
3. ປະລິມານ ແລະ ຄຸນນະພາບຂອງການນໍາໃຊ້ກອງທຶນຄຸ້ມຄອງໄພພິບັດ ແລະ ສັງຄົມສົງເຄາະ;
4. ຄໍາຮ້ອງ, ຄໍາສະເໜີຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;
5. ຄວາມຮັບຜິດຊອບ ແລະ ການປະພຶດຂອງພະນັກງານ ທີ່ຈັດຕັ້ງປະຕິບັດວຽກງານກອງທຶນຄຸ້ມຄອງໄພພິບັດ ແລະ ສັງຄົມສົງເຄາະ.

### ມາດຕາ 36 ຮູບແບບການກວດກາ (ປັບປຸງ)

ຮູບແບບການກວດກາປະກອບດ້ວຍ:

1. ການກວດກາປົກກະຕິ ຊຶ່ງແມ່ນກວດກາຕາມແຜນການທີ່ກໍານົດໄວ້;
2. ການກວດກາ ເພື່ອຕິດຕາມຜົນ ແມ່ນກວດກາຄືນພາຍຫຼັງທີ່ກ່າວເຕືອນ ຫຼື ແນະນໍາໃຫ້ມີການປັບປຸງປ່ຽນແປງ;
3. ການກວດກາກະທັນຫັນ ແມ່ນກວດກາໂດຍບໍ່ໄດ້ແຈ້ງໃຫ້ຮູ້ລ່ວງໜ້າ, ການດໍາເນີນການກວດກາໃຫ້ປະຕິບັດກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ.

## ໝວດທີ 9
## ຂໍ້ຫ້າມ

### ມາດຕາ 37 ຂໍ້ຫ້າມທົ່ວໄປ (ປັບປຸງ)

ຫ້າມພະນັກງານ ຫຼື ເຈົ້າໜ້າທີ່ກອງທຶນຄຸ້ມຄອງໄພພິບັດ ແລະ ສັງຄົມສົງເຄາະ ມີພຶດຕິກຳດັ່ງນີ້:

1. ສວຍໃຊ້ຕຳແໜ່ງ, ສິດ, ໜ້າທີ່ ເພື່ອຍັກຍອກ, ອຳນວຍຄວາມສະດວກໃຫ້ແກ່ບຸກຄົນ, ຄອບຄົວ ເພື່ອຫາຜົນປະໂຫຍດສ່ວນຕົວ ຫຼື ສ້າງຄວາມເສຍຫາຍແກ່ຜູ້ອື່ນ;
2. ທວງເອົາ, ຂໍເອົາ, ຮັບສິນບົນຈາກ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;
3. ປະຕິບັດໜ້າທີ່ດ້ວຍຄວາມປະໝາດ, ເລີ່ນເລີ້, ເມີນເສີຍ, ຂາດຄວາມຮັບຜິດຊອບຕໍ່ການປະຕິບັດໜ້າທີ່;
4. ກົດໜ່ວງທ່ວງດຶງ ເອກະສານ ໃນການແກ້ໄຂບັນຫາຕ່າງໆ ກ່ຽວກັບການຄຸ້ມຄອງໄພພິບັດ ແລະ ສັງຄົມສົງເຄາະ;
5. ຮຽກເອົາ ຄ່າທຳນຽມ, ຄ່າບໍລິການ ທີ່ບໍ່ຖືກຕ້ອງຕາມກົດໝາຍ;
6. ປອມແປງເອກະສານ, ອອກເອກະສານບໍ່ຖືກຕ້ອງ ຫຼື ທຳລາຍເອກະສານ;
7. ເປີດເຜີຍຄວາມລັບ, ເພີ່ມ ຫຼື ລຸດອັດຕາຄ່າຊ່ວຍເຫຼືອ ນຳໃຊ້ເງິນກອງທຶນຕາມລຳພັງໃຈ;
8. ມີພຶດຕິກຳອື່ນໆທີ່ເປັນການລະເມີດຂໍ້ຕົກລົງສະບັບນີ້,ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

### ມາດຕາ 38 ຂໍ້ຫ້າມສຳລັບຜູ້ໄດ້ຮັບການຊ່ວຍເຫຼືອ (ປັບປຸງ)

ຫ້າມຜູ່ທີ່ໄດ້ຮັບການຊ່ວຍເຫຼືອຈາກກອງທຶນຄຸ້ມຄອງໄພພິບັດ ແລະ ສັງຄົມສົງເຄາະ ມີພຶດຕິກຳ ດັ່ງນີ້:

1. ລາຍງານຄວາມເສຍຫາຍຂອງຕົນ ແລະ ຄົວເຮືອນ ໂດຍບໍ່ມີມູນຄວາມຈິງ;
2. ໃຫ້ຂໍ້ມູນ ຂ່າວສານທີ່ບໍ່ຖືກຕ້ອງ, ໃຫ້ຂໍ້ມູນເທັດ ແລະ ປອມແປງເອກະສານ;
3. ສົມຮູ້ຮ່ວມຄິດແກ່ພະນັກງານ ຫຼື ເຈົ້າໜ້າທີ່;
4. ບິດເບືອນ, ກ່າວຫາພະນັກງານ, ເຈົ້າໜ້າທີ່ ຫຼື ການຈັດຕັ້ງໂດຍບໍ່ມີມູນຄວາມຈິງ;
5. ມີພຶດຕິກຳອື່ນໆທີ່ເປັນການຂັດຕໍ່ຂໍ້ຕົກລົງສະບັບນີ້,ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ.

### ມາດຕາ 39 ຂໍ້ຫ້າມສຳລັບສະພາບໍລິຫານ ແລະ ກອງເລຂາກອງທຶນ (ປັບປຸງ)

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງ ທີ່ມີພຶດຕິກາ ດັ່ງນີ້:

1. ສວຍໂອກາດສໍ້ລາດບັງຫຼວງ;
2. ສົມຮູ້ຮ່ວມຄິດກັບເປົ້າໝາຍເພື່ອສໍ້ໂກງ;
3. ມີພຶດຕິກຳອື່ນ ທີ່ເປັນການລະເມີດຂໍ້ຕົກລົງສະບັບນີ້, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 10
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 40 ນະໂຍບາຍຕໍ່ຜູ້ມີຜົນງານ (ປັບປຸງ)

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ປະກອບສ່ວນດ້ານເຫື່ອແຮງ, ສະຕິປັນຍາ ແລະ ຊັບສິນເຂົ້າໃນກອງທຶນຄຸ້ມຄອງໄພພິບັດ ແລະ ສັງຄົມສົງເຄາະ ຈະໄດ້ຮັບການຍ້ອງຍໍຕາມຄວາມເໝາະສົມ.

**ມາດຕາ 41 ມາດຕະການຕໍ່ຜູ້ລະເມີດ (ປັບປຸງ)**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຫາກລະເມີດຂໍ້ຕົກລົງສະບັບນີ້ ຈະສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ ຫຼື ຖືກລົງໂທດຕາມກົດໝາຍ.

## ໝວດທີ 11
## ບົດບັນຍັດສຸດທ້າຍ

**ມາດຕາ 42 ການຈັດຕັ້ງປະຕິບັດ (ໃໝ່)**

ຄະນະສະພາບໍລິຫານກອງທຶນ ແລະ ກອງເລຂາກອງທຶນ ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນດີ ແລະ ລາຍງານສະພາບການເຄື່ອນໄຫວຮອບດ້ານຂອງກອງທຶນໄພພິບັດ ແລະ ສັງຄົມສົງເຄາະ ໃຫ້ຄະນະກຳມະການຄຸ້ມຄອງໄພພິບັດ ຢ່າງໜ້ອຍປີລະ ສອງເທື່ອ.

ບັນດາພະແນກການອ້ອມຂ້າງແຂວງ, ອົງການທຽບເທົ່າ ແລະ 7 ເມືອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 43 ຜົນສັກສິດ (ປັບປຸງ)**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ພິມລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ ເປັນຕົ້ນໄປ ແລະ ປ່ຽນແທນຂໍ້ຕົກລົງຂໍ້ຕົກລົງ ສະບັບເລກທີ 1096/ຈຂ.ອຊ, ລົງວັນທີ 31 ກໍລະກົດ 2018 ວ່າດ້ວຍກອງທຶນແຮຊ່ວຍເຫຼືອສຸກເສີນຜູ້ປະສົບໄພພິບັດ./.

ເຈົ້າແຂວງ

ບຸນຄົງ ຫຼ້າຈຽມພອນ